ວິທີການປູກໝາກຖົ່ວຝັກຍາວ

ໂດຍ:ພູທອນ ສົມະວັນ,ສູນຂໍ້ມູນຂ່າວສານ

ຖົ່ວຝັກຍາວ ເປັນຜັກທີ່ໃຊ້ສ່ວນຂອງໝາກ ຫຼືເອີ້ນວ່າຝັກ ສຳລັບຮັບປະທານເປັນຜັກທີ່ມີຄວາມນິຍົມບໍລິໂພກ ຢູ່ທຸກໆ ພາກຂອງປະເທດເຮົາ,ສາມາດປູກໄດ້ຕະຫຼອດປີ,ຂາຍງ່າຍ ແລະ ຕະຫຼາດມີຄວາມຕ້ອງການສູງ

ການຕຽມດິນ

ໄຖດິນເລິກປະມານ 20 ຊຕມ.ໃສ່ຝຸ່ນຄອກ ຫຼືປູນຂາວ(ຖ້າຈຳເປັນ).ປະໄວ້ປະມານ 2-3 ອາທິດ ໃສ່ຝຸ່ນຄອກຮອງພື້ນ ອັດຕາ 2 ໂຕນ/1,600 ມ2. ແລະ ໃສ່ປຸຍສູດ 15-15-15 ອັດຕາ 30 ກິໂລກຼາມ/1,6000 ມ2.

ວິທີປູກ

ປູກໂດຍຢອດເມັດ ແກ່ນ 3 ເມັດ /ຂຸມ,ຫຼັງຈາກປູກແລ້ວຖົມເມັດດ້ວຍຝຸ່ນຄອກ 2-3 ກຳມື /ຂຸມຫຼັງຈາກປູກໄດ້ 7-15ມື້ ເມື່ອເລີ່ມມີໃບ2-3 ໃບ ໃຫ້ເລືອກເອົາຕົ້ນທີ່ສົມບູນໄວ້ 2 ຕົ້ນ/ຂຸມ

ໄລຍະປູກ

ໄລຍະຫ່າງລະຫວ່າງແຖວ 70-100ຊຕມ.ລະຫວ່າງຕົ້ນ 40-50 ຊຕມ

ການໃຫ້ນ້ຳ

ຄວນໃຫ້ນ້ຳຢ່າງສະໝ່ຳສະເໝີ ແຕ່ບໍ່ຄວນໃຫ້ໃຫ້ນ້ຳຢ່າງສະໝ່ຳສະເໝີແຕ່ບໍ່ຄວນຫຼາຍເກີນໄປ ເພາະຈະເຮັດໃຫ້ຕົ້ນເນົ່າ.ທັງນີ້ໃຫ້ພິຈາລະນາຈາກພືດທີ່ປູກລະຫວ່າງໃນຊ້ວງອອກດອກ ແລະ ຕິດຝັກ ບໍ່ຄວນຂາດນ້ຳເດັດຂາດ

.

ການເຮັດຄ້າງ

ใຊ້ໄມ້ເຮັດຄ້າງ ປັກຂຸມລະ 1 ອັນສູງ 2.50 ແມັດ. ປັກອ່ຽງເຂົ້າຫາເຄິ່ງກາງເປັນຄູ່ຫຼັງຈາກນັ້ນໃຫ້ເອົາໄມ້ຄ້າງ ພາດກາງມັດຍຶດໄວ້ອີກເທື່ອໜຶ່ງແລ້ວຄຸມດ້ວຍຕາໜ່າງ

ການໃສ່ປຸຍ

ຫຼັງຈາກປູກໄດ້ປະມານ 20 ມື້ ແລ້ວໃສ່ປຸຍສູດ 46-0-0 ອັດຕາ 20 ກິໂລກຼາມ /1,600 ມ2. ແລ້ວປະສົມປຸຍສູດ 15-15-15ອັດຕາອັດຕາ 25 ກິໂລກຼາມ /1,600 ມ2. ສຳລັບໃນຊ້ວງອອກດອກ ແລະ ເປັນໝາກໃຫ້ໃສ່ປຸຍສູດ 13-13-21 ອັດຕາ30-50ອັດຕາ 50 ກິໂລກຼາມ/1,600 ມ2.ໂດຍໃສ່ 15 ມື້/ເທື່ອ

ການເກັບກ່ຽວ

ອາຍຸການເກັບກ່ຽວຖົ່ວຝັກຍາວ ແມ່ນປະມານ 55-60 ມື້ ຫຼັງຈາກທີ່ເຮົາປູກ.ຂຶ້ນກັບພັນ ແລະ ສະພາບແວດລ້ອມທີ່ກ່ຽວຂ້ອງການເກັບກ່ຽວແມ່ນ ໃຫ້ເລືອກເອົາຝັກທີ່ຊື່ ແລະ ງາມ ຕາມຄວາມຕ້ອງການຂອງຕະຫຼາດ ຫຼືຈາກອາຍຸ ຕັ້ງແຕ່ມື້ທີ່ປະສົມເກສອນຈົນເຖິງເກັບກ່ຽວປະມານ 10-15 ມື້ ຄວນເກັບໃນເວລາທີ່ແດດອ່ອນໆ ແລະ ເຂົ້າໃນຮົ່ມ ທັນທີຫຼັງຈາກເກັບແລ້ວ